# ດ້ວງກໍ

## 1. ລັກສະນະທົ່ວໄປ

ດ້ວງກໍຢູ່ໃນປະເທດເຮົາມີຫຼາຍຊະນິດ ແຕ່ດ້ວງກໍທີ່ທຳລາຍເຂົ້າໄຮ່ ແລະ ເຂົ້ານາ ສ່ວນຫຼາຍແມ່ນມີ 4 ຊະນິດຄື : ດ້ວງກໍສີເຫຼືອງ, ດ້ວງກໍສີຊົມພູ, ດ້ວງກໍສີລາຍແຊກ ແລະ ດ້ວງກໍສີເຫຼືອງ, ແມ່ດ້ວງກໍມັກອອກຫຼິ້ນແສງໄຟ ໃນຍາມກາງຄືນ, ຖ້າປະກົດເຫັນແມ່ດ້ວງກໍອອກຫຼິ້ນແສງໄຟ ຄວນລະມັດລະວັງໃນການປົວລະບັດຮັກສາຕົ້ນເຂົ້າ .



ດ້ວງກໍສີລາຍແຊກ



ດ້ວງກໍສີຊົມພູ



ດ້ວງກໍສີຂາວ



ດ້ວງກໍສີເຫຼືອງ

## 2. ໄລຍະລະບາດ

ດ້ວງກໍລະບາດໃນນາເຂົ້າ ແຕ່ໄລຍະກ້າ ຫາ ເກັບກ່ຽວ ແຕ່ໄລຍະທີ່ລະບາດຮ້າຍແຮງ ສ່ວນຫຼວງຫຼາຍແມ່ນໃນໄລຍະຕົ້ນເຂົ້າເລີ້ມແຕກກໍ, ແຕກກໍສູງສຸດ ແລະ ເຂົ້າຖອກຮວງ ດ້ວງກໍທຳລາຍເຂົ້າໃນໄລຍະເຂົ້າແຕກກໍເອີ້ນວ່: ເຂົ້າຕາຍຍອດ ຫຼື ເຂົ້າຕາຍໃຈ ແຕ່ຖ້າດ້ວງກໍເຂົ້າທຳລາຍໃນໄລຍະເຂົ້າຖອກຮວງເອີ້ນວ່າ: ເຂົ້າຫົວຫງອກ ຫຼື ເຂົ້າຕາຍພາຍ.

## 3. ວົງຈອນຊີວິດ ແລະ ລັກສະນະການທຳລາຍ

ການຈະເລີນເຕີບໂຕຂອງດ້ວງກໍ ພວກນີ້ແມ່ນແບບສົມບູນ ມີ 4 ໄລຍະຄື :

ໄລຍະ 6 — 7 ມື້ ໄຂ່ຈະຟັກ ຫຼື ເບາະອອກເປັນໂຕດ້ວງກິນອາຫານຢູ່ພາຍໃນລຳຕົ້ນ, ອາຍຸຂອງໂຕດ້ວງ 35 — 45 ມື້, ຈຶ່ງເຂົ້າດັກແດ້ ໄລຍະນີ້ມັນບໍ່ກິນອາຫານ, ອາຍຸເປັນດັກແດ້ 8 — 13 ມື້ , ຈາກນັ້ນກໍ່ຈະຟັກອອກເປັນແມງກະບີ້, ໄລຍະແມງກະບີ້ 4 — 7 ມື້ . ແມງກະບີ້ຂອງດ້ວງກໍແມ່ນຶ່ງຈະໄຂ່ໄດ້ 1— 2 ໜ່ວຍ, ແມ່ແມງກໍ່ຈະເລີ້ມກິນອາຫານໄດ້ໂລດຄືທຳອິດໂຕດ້ວງນ້ອຍ ກໍ່ເລັຽກິນສານສີຂຽວ ຢູ່ໃບໄກ້ໆກັບບໍລິເວນໜ່ວຍໄຂ່ຢູ່ ຈາກນັ້ນໂຕດ້ວງນ້ອຍຈະທາວໄຍລົງໄປຫາກາບໃບ ທີ່ລຳຕົ້ນຂອງຕົ້ນເຂົ້າ ແລ້ວເຂົ້າທຳລາຍຢູ່ກາບໃບນັ້ນເລີຍ.

## 4. ການປ້ອງກັນ

- ຄວນໃຊ້ໄຟຕະກຽງໄຕ້ໄວ້ ໃນເວລາກາງຄືນ ເພື່ອຂ້າແມ່ດ້ວງກໍ.
- ຄວນອະນາໄມນາ ເພື່ອທຳລາຍບ່ອນລີ້ຊ້ອນ ຫຼື ວາງໄຂ່ຂອງແມ່ດ້ວງກໍ.
- ກຳຈັດດ້ວຍຢາຂ້າແມງໄມ້ ໂດຍໃຊ້ຢາ ເບຫັດເຊ 12 % ໃນອັດຕາ 15 — 20 ກລ/ຮຕ.
- ໃຊ້ຢາ ດີອາຊີນອນ 14 % ໃນອັດຕາ 8 — 15 ກລ/ຮຕ.
- ໃຊ້ຢາໂຟຟູຣານ 3 % ແຊ່ຕົ້ນກ້າ ໃນອັດຕາ 250 ກຣາມປະສົມກັບນ້ຳ 20 ລິດ ແລ້ວແຊ່ມັດກ້າ 6 — 12 ຊົ່ວໂມງແລ້ວຈຶ່ງນຳໄປປັກດຳ.

Laos Extension for Agriculture Project
P.O. Box 9159
Vientiane, Lao P.D.R.

ກະຊວງກະສິກຳ ແລະ ປ່າໄມ້
ກອງສົ່ງເສີມກະສິກຳ ແລະ ປ່າໄມ້ ແຫ່ງຊາດ
ພະແນກສົ່ງເສີມ ແລະ ຄຸ້ມຄອງໂຄງການ

# ການປ້ອງກັນ ແລະ ກຳຈັດແມງໄມ້ສັດຕູພືດຕົ້ນຕໍຂອງເຂົ້າ

# ( ດ້ວງກໍ )



ຈັດຕັ້ງປະຕິບັດໂດຍ CETDU
(ໜ່ວຍງານຝຶກອົບຮົມສົ່ງເສີມ ຂັ້ນສູນກາງ)

ຮ່ວມກັບ:

ໂຄງການ ສົ່ງເສີມ ກະສິກຳ (LEAP)